

# ຄູ່ມືການກ້ຳແກ່ນຊາ

ຈາກກຸ່ມຜະລິດຊາ
ບ້ານ ຍອດປ່ຽງ

## ການເກັບແກ່ນຊາ

ລະດູການທີ່ເໝາະສົມທີ່ສຸດໃນການເກັບແກ່ນຊາແມ່ນຢູ່ລະຫວ່າງ ທ້າຍເດືອນ ກັນຍາຫາ ຕົ້ນເດືອນ ພະຈິກ, ໄລຍະນີ້ແກ່ນຊາແມ່ນສຸກດີ

ສັງເກດເບິ່ງໝາກຊາຕ້ອງເປັນໝາກທີ່ແກ່ດີ, ເຮົາແກະເອົາເປືອກນອກອອກແລ້ວ ຈະສັງເກດເຫັນແກ່ນຊາທີ່ຢູ່ທາງໃນເປັນສີນ້ຳຕານເຂັ້ມ ແມ່ນສາມາດເກັບມາກ້າແກ່ນໄດ້



ຖ້າໝາກເປັນສີຂຽວ, ສີນ້ຳຕານຍັງບໍ່ເຂົ້າໝົດ ຫລື ເຂົ້າເຄິ່ງໜຶ່ງຍັງບໍ່ເຖິງຂວັ້ນເຮົາຕ້ອງປະໄວ້ກ່ອນ.



## ການປອກເປືອກແກ່ນຊາ



ແບບແກະເອົາແກ່ນເລີຍ:
ພາຍຫຼັງເກັບແກ່ນຊາມາແລ້ວແມ່ນ ນຳແກ່ນຊາ ມາແກະເອົາແກ່ນໂດຍກົງເລີຍ



ແບບຕາກແດດ:
ແມ່ນນຳເອົາໝາກຊາທີ່ເກັບມາໄດ້ມາໃສ່ກະດົ້ງ ຫຼື ກະທົ່ງໄປຕາກແດດ 1 ມື້ເພື່ອໃຫ້ເປືອກຊາແຕກ ແລ້ວຈິ່ງນຳມາແກະເອົາແກ່ນຊາອອກ, ວິທີນີ້ຈະສະດວກໃນການແກະເອົາແກ່ນຫຼາຍກວ່າ

## ການຮັກສາແກ່ນຊາ

ວິທີທີ1: ເອົາໝາກຊາທີ່ແກ່ດີທີ່ບໍ່ທັນແກະເປືອກມາໃສ່ເປົາ ຫຼື ກະຕ່າເກັບໄວ້ໃນຮົ່ມ ສາມາດເກັບຮັກສາໄວ້ໄດ້ 1 ເດືອນ ກໍ່ສາມາດນຳໄປແກະແກ່ນຊາຢູ່ທາງໃນໄດ້.

ວິທີທີ2: ແກ່ນຊາບໍ່ຄືກັບແກ່ນພືດທົ່ວໄປເພາະບໍ່ສາມາດເກັບໄວ້ໄດ້ດົນ, ພາຍຫຼັງແກະແກ່ນແລ້ວບໍ່ຄວນປະໄວ້ເກີນ 2 ມື້, ຫ້າມບໍ່ໃຫ້ຕາກແດດ ຫຼື ຖືກແດດ, ຕ້ອງປະໄວ້ບ່ອນຮົ່ມເທົ່ານັ້ນ, ເພື່ອຮັກສາແກ່ນຊາໃຫ້ໄດ້ດົນແມ່ນຝັງດິນໄວ້ວິທີນີ້ສາມາດຮັກສາແກ່ນຊາໄດ້ສູງສຸດ 3 ອາທິດ

ວິທີຝັງດິນ
ພາຍຫຼັງແກະແກ່ນຊາບໍ່ເກີນ 2 ວັນໃຫ້ເອົາແກ່ນຊາໃສ່ໃນເປົາທີ່ບາງລະບາຍອາກາດໄດ້ດີ ແລະ ມັດປາກເປົາໃຫ້ດີ ເພື່ອຮັກສາຄວາມຊຸ່ມຂອງເນື້ອເຍື່ອໃນແກ່ນຊາ






ຂຸດຂຸມໃຫ້ໄດ້ຄວາມກວ້າງເທົ່າເປົາຊາ ແລະ ເລິກປະມານ 15-20 ຊມ



ນຳເອົາແກ່ນຊາທີ່ບັນຈຸໃນເປົາ ລົງຂຸມແລ້ວຂະໃຫ້ບາງໆ ຫຼັງຈາກນັ້ນກໍ່ເອົາດິນ ລົງຖົມປະໄວ້

# ການຈຶມນ້ຳແກ່ນຊາກ່ອນນຳໄປກ້າ



ກ່ອນກ້າແກ່ນຊາຕ້ອງນຳເອົາແກ່ນຊາໄປເທລົງໃນຊາມນ້ຳ, ຕັກເອົາແກ່ນຊາທີ່ຟູອອກຄັດເລືອກເອົາແຕ່ແກ່ນທີ່ຈົມ ແລ້ວແຊ່ນ້ຳປະໄວ້ 24 – 48 ຊົ່ວໂມງ (1 ມື້ 1 ຄືນ ຫຼື 2 ມື້ ແຕ່ບໍ່ໃຫ້ຫຼຸດ 24 ຊົ່ວໂມງ) ແລ້ວຈຶ່ງນຳໄປລົງໃສ່ໜານ ຫຼື ເບົ້າ

# ການກຽມກ້າແກ່ນຊາ

ການກຽມໜານ: ນຳໃຊ້ດິນຊາຍ 1 ເປົາ , ແກບເຜົາ ເຄິ່ງເປົາ ແລະ ດິນປູກຝັງຜະສົມເຂົ້າກັນ ເພື່ອນຳມາເຮັດໜານກ້າ ຂະໜາດຂອງໜານກ້າ ລວາງກ້ວາງ 1 ແມັດ, ຍາວ 2 ແມັດ ແລະ ສູງ ປະມານ 12-15 ຊັງຕີແມັດ






ການກຽມເບົ້າ: ກະກຽມດິນໂດຍນຳໃຊ້ດິນປູກຝັງ 3 ຄຸ, ດິນຊາຍ 2 ຄຸ (ຖ້າມີ) ແລະ ແກບເຜົາ 1 ຄຸ ປະສົມເຂົ້າກັນ ແລ້ວນຳໄປປ່າຍໃສ່ເບົ້າ ຖົງເບົ້າຄວນມີຂະໜາດ 6 x 20 ຊມ

ຫຼັງຈາກກະກຽມໜານ ແລະ ເບົ້າແລ້ວແມ່ນໃຫ້ຫົດນ້ຳໃສ່ໃຫ້ມີຄວາມຊຸ່ມຈຶ່ງເອົາແກ່ນລົງກ້າ

ການເອົາແກ່ນລົງກ້າແມ່ນໃຫ້ເອົາແກ່ນຊາເບື້ອງທີ່ມີຕາຂວ້າມລົງໃນອັດຕາສ່ວນ 4/5 ຂອງແກ່ນ







ກ້າໃສ່ໜານ



ກ້າໃສ່ເບົ້າ

ຫຼັງຈາກນັ້ນ, ໃຫ້ນຳເອົາຝຸ່ນມາຖົມບາງໆ, ນຳເຟືອງມາປົກອີກຄັ້ງ ແລ້ວຫົດນ້ຳໃຫ້ຊຸ່ມ



## ການບົວລະບັດຮັກສາ

ໃນໄລຍະ 3 ອາທິດທຳອິດແມ່ນຕ້ອງຫົດນ້ຳທຸກມື້, ທຸກໆຕອນແລງ (ບໍ່ຄວນຫົດຕອນເຊົ້າ), ອາທິດທີ 4-5 ແມ່ນຫົດນ້ຳມື້ບາມື້, ພາຍຫຼັງ 5 ອາທິດແມ່ນບາ 2 ມື້ຫົດເທື່ອໜຶ່ງເຮັດແບບນີ້ຕໍ່ໄປຈົນຮອດມື້ເອົາໄປປູກ ຄວນໝັ່ນຕິດຕາມຫຼົກຫຍ້າ ໃນໝານກ້າ ແລະ ເບົ້າເປັນປະຈຳ




ທ່ານສາມາດເບິ່ງລາຍລະອຽດຂໍ້ມູນເພີ່ມເຕີມໄດ້ທີ່ www.Laotea.org

ວີດີໂອຫົວຂໍ້ທີ 1: ການກ້າແກ່ນຊາ

ຄູ່ມືຫົວຂໍ້ທີ 1: ການກ້າແກ່ນຊາ

ສະໜັບສະໜຸນໂດຍ:

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service